## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 29 ກັນຍາ 2024 (09-29-2024)

---

## ຈຸດປະສົງທີ່ສະແດງອອກ

**ຈຸດສຳຄັນໃນບົດຮຽນ:** ຈຸດປະສົງຂອງພວກເຮົາຖືກຄົບເຕັມຂນະທີ່ເຮົາຮັບໃຊ້ຄົນອື່ນໆດ້ວຍຄວາມຮັກ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຖ້າທ່ານເປັນເບບີບຸມເມີ (Baby Boomer) (ເກີດຊ່ວງ 1946-1964), ທ່ານເປັນສ່ວນນຶ່ງທີ່ຖືກເອີ້ນວ່າ "ລຸ້ນຂ້ອຍ." ຄົນລຸ້ນນີ້ໄດ້ຖືກຂນານນາມວ່າ ພວກຊື່ງບູຊາຕົນເອງ (narcissistic) ແລະສຸມໃຈ-ໃສ່ຕົນເອງ. ຢ່າງໃດກໍຕາມ, ໃນເວລາຕໍ່ມາ, ວາລະສານ ໄທມ໌ (Time) ໄດ້ໃສ່ຊື່ໃຫ້ຄົນຊ່ວງຕໍ່ມາວ່າ ມຽວເລັນນຽວ (Millennials) ເປັນລຸ້ນ ຂ້ອຍ ຂ້ອຍ ຂ້ອຍ! (ME ME ME). ກຸ່ມສຸມໃຈໃສ່ຕົນເອງ-ເປັນຈຸດໃຈກາງນີ້ສືບທອດມາຈາກຄົນລຸ້ນກ່ອນແມ່ນແຜ່ຂຍາຍໄປທົ່ວສັງຄົມຂອງພວກເຮົາ. ມັນບໍ່ໄດ້ຖືກຈຳກັດໃນຄົນລຸ້ນດຽວ. ພວກເຮົາກຳລັງເຫັນສິ່ງນີ້ຢູ່ອ້ອມຕົວພວກເຮົາ, ແລະສິ່ງທີ່ພວກເຮົາສູນເສັຽໃນການປ່ຽນແປງນີ້ແມ່ນການສຸມໃຈໃສ່ຊຸມຊົນ. ພວກເຮົາບໍ່ຄິດກ່ຽວກັບຄົນອື່ນ. ໃນຮອບຊາວຫ້າປີທີ່ຜ່ານມາຄວາມຮັກຊາດໄດ້ຫຼຸດລົງຈາກ 70 ເປັນ 38 ເປີເຊັນ. ການເຊື່ອມຕໍ່ກັບຄົນອື່ນໆໄດ້ກາຍເປັນເຣື່ອງທີ່ບໍ່ສຳຄັນ. ຄວາມສົນໃຈໃນການມີລູກໄດ້ຫຼຸດລົງຈາກ 59 ຫາ 30 ເປີເຊັນ. ການເຊື່ອມຕໍ່ກັບຄອບຄົວໄດ້ກາຍເປັນເຣື່ອງທີ່ບໍ່ສຳຄັນ. ການມີສ່ວນຮ່ວມໃນຊຸມຊົນໄດ້ຫຼຸດລົງຈາກ 62 ຫາ 27 ເປີເຊັນ. ການເຊື່ອມຕໍ່ກັບເພື່ອນບ້ານຂອງພວກເຮົາໄດ້ກາຍເປັນສິ່ງທີ່ບໍ່ສຳຄັນ. ຍັງມີທາງທີ່ດີກວ່າໃນການດຳເນີນຊີວິດ. ເມື່ອເຮົາເຊົາເບິ່ງຕົວເອງພຽງແຕ່ໃຫ້ເຮົາມີຄວາມສຸກແລະຈົ່ງເບິ່ງໄປທີ່ພຣະເຢຊູ, ຊີວິດກາຍເປັນຫຼາຍກວ່າກ່ຽວກັບຕົວເອງ. ມັນນຳເຮົາໃຫ້ເຫັນຄົນອື່ນ, ຮັກຄົນອື່ນ, ແລະມີສ່ວນຮ່ວມໃນຊີວິດເຂົາເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>**ສຶກສາພຣະຄັມພີ**</u>

### 1. ຄາລາເຕັຽ 6:1-5

*1. ພວກພີ່ນ້ອງເອີຍ, ຖ້າຄົນໃດຫາກພົບຄົນທີ່ຫຼົງຜິດປະການໃດ ເຈົ້າທັງຫຼາຍຜູ້ຢູ່ຝ່າຍພຣະວິນຍານ ຈົ່ງຊ່ອຍຄົນຢ່າງນັ້ນດ້ວຍຄວາມອ່ອນສຸພາບໃຫ້ກັບຄືນດີໃໝ່ໂດຍໃຫ້ທຸກຄົນຄຶດເຖິງຕົນເອງ ຍ້ານວ່າຕົນຈະຖືກຊັກຈູງໃຫ້ຫຼົງໄປ. 2. ຈົ່ງຊ່ອຍຮັບພາຣະອັນໜັກຂອງກັນແລະກັນ ຖ້າເຮັດດັ່ງນີ້ພວກເຈົ້າກໍເຮັດຕາມພຣະບັນຍັດຂອງພຣະຄຣິດ. 3. ເພາະວ່າຖ້າຜູ້ໃດຖືຕົວວ່າເປັນຜູ້ສຳຄັນໃນເມື່ອຕົນບໍ່ສຳຄັນອັນໃດ ຜູ້ນັ້ນກໍລໍ້ລວງຕົນເອງ. 4. ທຸກຄົນຈົ່ງສັນນະສູດເບິ່ງການງານຂອງຕົນເອງຈຶ່ງຈະມີສິ່ງທີ່ເອົາມາອວດອ້າງໄດ້ໃນຕົວເອງ ໂດຍບໍ່ແມ່ນປຽບກັບຜູ້ອື່ນ. 5. ເພາະວ່າທຸກຄົນຕ້ອງຮັບຜິດຊອບຕໍ່ພາຣະຂອງຕົນເອງ.*

ທ່ານໄດ້ຮັບຈຸດປະສົງໃນພຣະຄຣິດ. ນັ້ນຄືຄວາມງົດງາມຂອງຂ່າວປະເສີດ: ພຣະຄຣິດຊົງຟື້ນຟູທ່ານໃຫ້ເປັນຄົນທີ່ພຣະອົງຊົງສ້າງໃຫ້ທ່ານເປັນ. ການດຳເນີນຊີວິດຕາມຈຸດປະສົງນັ້ນອາດຈະເປັນເຣື່ອງຍາກ, ແຕ່ໃນທີ່ນີ້ແມ່ນບ່ອນທີ່ຄວາມງາມຂອງຂ່າວປະເສີດຈະສ່ອງແສງອີກເທື່ອນຶ່ງ: ທ່ານບໍ່ໄດ້ຖືກປະໃຫ້ຢູ່ຄົນດຽວທີ່ຈະດຳເນີນຊີວິດຕາມຈຸດປະສົງນັ້ນໃນອຳນາດຂອງທ່ານເອງ, ໃນການສຶກສາຄັມພີທີ່ຜ່ານມາຂອງພວກເຮົາ, ພວກເຮົາໄດ້ເຫັນວ່າພຣະເຈົ້າໄດ້ວາງພຣະວິນຍານບໍຣິສຸດຂອງພຣະອົງໃນທຸກຄົນທີ່ເຊື່ອ, <u>ແລະໃນຂະນະທີ່ທ່ານເດີນໄປໃນພຣະວິນຍານຂອງພຣະອົງ, ຈົ່ງປ່ອຍໃຫ້ພຣະອົງເພີ້ມເຕັມແລະສວມອຳນາດແກ່ທ່ານ, ເພື່ອທ່ານຈະດຳເນີນຊີວິດຕາມຈຸດປະສົງນັ້ນ</u>. ທ່ານອາດຈະສົງສັຍວ່າ, "ຈຸດປະສົງແທ້ຈິງຂອງຂ້ອຍແມ່ນຫຍັງ?" ຂ້ອຍມັກວິທີທີ່ສັ້ນແລະຫຍໍ້ໆທີ່ຈຸດປະສົງຂອງພວກເຮົາຖືກລະບຸໄວ້ວ່າ: <u>"ຈຸດສຸດທ້າຍຂອງມະນຸດແມ່ນເພື່ອສັຣເສີນພຣະເຈົ້າແລະມີຄວາມສຸກກັບພຣະອົງຕລອດໄປ."</u> ເຮົານຳສງ່າຣາສີມາສູ່ພຣະເຈົ້າເມື່ອເຮົາຮັບໃຊ້ຄົນທີ່ຢູ່ອ້ອມຮອບເຮົາ, ຜູ້ທີ່ພຣະອົງໄດ້ນຳມາສູ່ຊີວິດຂອງເຮົາ. ຊີວິດຄຣິສະຕຽນບໍ່ໄດ້ໝາຍເຖິງການໃຫ້

ຢູ່ໂດດດ່ຽວ. ເມື່ອທ່ານມາຫາພຣະຄຣິດ, ທ່ານມາທີ່ພຣະກາຍຂອງພຣະຄຣິດ-ຄຣິສຕະຈັກ. ພວກເຮົາຢູ່ໃນນີ້ຮ່ວມກັນ. ເຮົາມີຄວາມຮັບຜິດຊອບທີ່ຈະຊ່ວຍເຊິ່ງກັນແລະກັນໃຫ້ໃຫຍ່ຂຶ້ນໃນພຣະຄຣິດ, ແລະນັ້ນກໍລວມເຖິງການຮັບມືກັບບາບແລະຄວາມຜິດພາດ. ພວກເຮົາຖືກເອີ້ນໃຫ້ຮັບໃຊ້ໂດຍການຊ່ວຍເສີມສ້າງຄົນອື່ນ. ຄໍາວ່າ "ເສີມສ້າງ" ຈະຖືກໃຊ້ໃນສະຕະວັດທໍາອິດເພື່ອຈອດຕໍ່ກະດູກທີ່ພິກໂບກຫຼືແຕກ. ເມື່ອເຮົາເສີມສ້າງຜູ້ໃດຜູ້ນຶ່ງ, ເຮົາກໍາລັງຊອກຫາທີ່ຈະນໍາການປິ່ນປົວໃຫ້ເຂົາເຈົ້າເດີນກັບພຣະຄຣິດ. ໂປໂລໄດ້ໃຫ້ເຮົາສີ່ວິທີທີ່ຈະກ້າວເຂົ້າໄປໃນການຊ່ວຍເຫຼືອຄົນຜູ້ນຶ່ງ.

**1. ກ້າວເຂົ້າດ້ວຍພຣະຄຸນ.** ຂ້າພະເຈົ້າຂໍຂອບໃຈຜູ້ທີ່, ໃນອາດີດ, ກ້າວເຂົ້າໄປໃນຊີວິດຂອງຂ້າພະເຈົ້າເພື່ອຊ່ວຍໃຫ້ເຫັນ "ຄວາມຜິດພາດຂອງວິທີການຂອງຂ້າພະເຈົ້າ." ອັນນີ້ບໍ່ເຄີຍເຮັດດ້ວຍທັສນະຂອງຄວາມຊອບທັມໃນຕົວເອງຫຼືວິນຍານທີ່ຈອງຫອງ, ແຕ່ໄດ້ເຮັດມັນເພື່ອຊ່ວຍໃຫ້ຂ້າພະເຈົ້າເດີນກັບພຣະຄຣິດດັ່ງທີ່ຄວນ. ໂປໂລໄດ້ເອີ້ນພວກເຮົາສູ່ "ດ້ວຍຄວາມອ່ອນສຸພາບ" (ຂໍ້ 1). ວິນຍານທີ່ອ່ອນໂຍນບໍ່ໄດ້ຍົກເວັ້ນຄວາມບາບຫຼືເບິ່ງຂ້າມຜົນກະທົບຂອງມັນ, ແຕ່ວ່າມັນເຂົ້າຫາບຸກຄົນດ້ວຍຄວາມອ່ອນໄຫວແລະຄວາມເຂົ້າໃຈ.

**2. ກ້າວເຂົ້າໄປດ້ວຍຄວາມລະມັດລະວັງ.** ໂປໂລຍັງໄດ້ເນັ້ນໜັກເຖິງການສັງເກດເບິ່ງຕົວເຮົາເອງເພື່ອວ່າພວກເຮົາ "ຈະບໍ່ຖືກລໍ້ລວງ" (ຂໍ້ 1). ເມື່ອພວກເຮົາເຕີບໃຫຍ່ຂຶ້ນໃນພຣະຄຣິດ, ພວກເຮົາຫວັງວ່າຈະເຮັດບາບໜ້ອຍລົງ. ຂ້າພະເຈົ້າໄດ້ຄົ້ນພົບວ່າແມ່ນພຣະເຈົ້າທີ່ຕັດສິນ (convicts) ແລະໃຫ້ຂ້າພະເຈົ້າຊັຍຊະນະຄວາມບາບຫຼືນິສັຍບາບບາງຢ່າງ. ພຣະອົງຍັງເລີ້ມຕົ້ນເພື່ອສະແດງໃຫ້ຂ້າພະເຈົ້າເຫັນບ່ອນອື່ນໆທີ່ຂ້າພະເຈົ້າມັກຈະເຮັດບາບ. ບໍ່ມີຄົນໃດໃນພວກເຮົາຈະບັນລຸຄວາມສົມບູນແບບ ຈົນກວ່າເຮົາຈະໄດ້ປະເຊີນໜ້າກັບພຣະຄຣິດໃນອານາຈັກຂອງພຣະອົງ. ແລະໃນຂນະທີ່ພວກເຮົາຢູ່ໃນໂລກນີ້, ທັມມະຊາດບາບເກົ່າ, ທີ່ຖືກຜ່າຍແພ້, ຈະຍັງຄົງພະຍາຍາມລຸກຂຶ້ນແລະນໍາພາພວກເຮົາໄປສູ່ບາບ. ພວກເຮົາບໍ່ຄວນປ່ອຍໃຫ້ເຄື່ອງປ້ອງກັນຂອງພວກເຮົາລົດລົງ.

**3. ກ້າວເຂົ້າດ້ວຍຄວາມຖ່ອມຕົວ.** ການກ້າວເຂົ້າໄປຊ່ວຍຄົນອື່ນໃນຂນະທີ່ຮູ້ເຖິງຄວາມສາມາດຂອງເຮົາທີ່ຈະຕົກຢູ່ໃນບາບ ຮຽກຮ້ອງໃຫ້ມີຄວາມຖ່ອມຕົວ. ພວກເຮົາບໍ່ເຄີຍຊ່ວຍຜູ້ໃດເມື່ອພວກເຮົາກໍາລັງຢູ່ກັບຄວາມຈອງຫອງຫຼືວິນຍານໂອ້ອວດ. ພວກເຮົາຮູ້ວ່າພວກເຮົາເປັນຄົນບາບພາຍໃຕ້ພຣະຄຸນຂອງພຣະເຈົ້າ. ເຮົາຈະຊ່ວຍໃຜບໍ່ໄດ້ຖ້າບໍ່ມີຄວາມຖ່ອມຕົວ. ດັ່ງທີ່ໂປໂລກ່າວວ່າ, *"ຖ້າຜູ້ໃດຖືຕົວວ່າເປັນຜູ້ສໍາຄັນໃນເມື່ອຕົນບໍ່ສໍາຄັນອັນໃດ ຜູ້ນັ້ນກໍລໍ້ລວງຕົນເອງ."* (ຂໍ້ 3).

**4. ກ້າວເຂົ້າດ້ວຍຄວາມຮັກ.** ເມື່ອເຮົາແບກພາລະຂອງກັນແລະກັນ, ເຮົາກໍເຮັດຕາມກົດຂອງພຣະຄຣິດ. ນັ້ນກໍຄືຄວາມຮັກ. ພາລະທີ່ໂປໂລໄດ້ອ້າງເຖິງໃນຂໍ້ທີ 2 ອາດສາມາດຫຼາຍກວ່າພາລະຂອງບາບ, ແຕ່ແນ່ນອນວ່າມັນເປັນບ່ອນທີ່ດີທີ່ຈະເລີ້ມຕົ້ນ. ເຮົາຖືກເອີ້ນໃຫ້ຮັກແລະສນັບສນູນຊຶ່ງກັນແລະກັນກັບພາລະແລະການທ້າທາຍອັນໃດກໍຕາມທີ່ເຂົາເຈົ້າກໍາລັງປະເຊີນ. ເບິ່ງທໍາອິດໃນຂໍ້ 5 ເບິ່ງຄືວ່າຂັດກັນກັບເລື່ອງນີ້: *"ຈົ່ງຊ່ວຍຮັບພາຣະອັນໜັກຂອງກັນແລະກັນ."* ຖ້າເຮົາແຕ່ລະຄົນຮັບຜິດຊອບໃນການແບກພາລະຂອງຕົນເອງເປັນຫຍັງຈຶ່ງບອກໃຫ້ກ້າວເຂົ້າໄປຊ່ວຍຄົນອື່ນດ້ວຍ? ບໍ່ແມ່ນຜູ້ນັ້ນບໍທີ່ຄວນຈະເຮັດຕາມຂໍ້ທີ 5 ແລະແບກພາລະຂອງຕົນເອງ? ຂ້າພະເຈົ້າຖືວ່າພາລະຂອງຂ້າພະເຈົ້າເປັນສິ່ງທີ່ເປັນຄວາມຮັບຜິດຊອບຂອງຂ້າພະເຈົ້າ. ແນ່ນອນ, ບາງຄັ້ງຄວາມຮັບຜິດຊອບເຫຼົ່ານັ້ນສາມາດຄວບຄຸມເຮົາແລະຮູ້ສຶກວ່າເປັນພາລະແທ້. ຕົວຢ່າງເຊັ່ນ: ແມ່ທີ່ລ້ຽງລູກດ່ຽວອາດມີໜ້າທີ່ຮັບຜິດຊອບໃນການຕອບສນອງໃຫ້ລູກໆຂອງນາງ, ແຕ່ລາວແບກພາລະຕ່າງໆໃນການຢູ່ທີ່ນັ້ນເພື່ອຊ່ວຍລູກໆຂອງນາງເຮັດການບ້ານຫຼືພາພວກເຂົາໄປໂຮງຮຽນເພາະລາວເຮັດວຽກທັງສອງບ່ອນ. ມັນເປັນໜ້າທີ່ຮັບຜິດຊອບຂອງນາງ, ແຕ່ຍ້ອນຄວາມຮັກ, ພວກເຮົາສາມາດກ້າວເຂົ້າໄປໃນການຊ່ວຍແບ່ງເບົາພາລະຂອງນາງ. ນັ້ນແມ່ນການປະຕິບັດຕາມກົດບັນຍັດຂອງພຣະຄຣິດ.

*ເມື່ອໃດທີ່ທ່ານຕ້ອງການຄົນມາຊ່ວຍທ່ານແບກພາລະ?*

## 2. ຄາລາເຕັຽ 6:6-8

*6. ສ່ວນຜູ້ທີ່ຮັບພຣະທັມຄໍາສອນແລ້ວ ຈົ່ງແບ່ງສິ່ງທີ່ດີທຸກຢ່າງໃຫ້ແກ່ຜູ້ທີ່ສອນຕົວເຖີ້ນ. 7. ຢ່າເຂົ້າໃຈຜິດ ພວກເຈົ້າຈະຫຼອກລວງພຣະເຈົ້າບໍ່ໄດ້ ເພາະວ່າຜູ້ໃດຫວ່ານສິ່ງໃດລົງກໍຈະເກັບກ່ຽວສິ່ງນັ້ນ. 8. ຜູ້ທີ່ຫວ່ານຕາມຕັນຫາຂອງທັມມະດາມະນຸດກໍຈະເກັບກ່ຽວຄວາມເປື່ອຍເນົ່າຈາກຕັນຫາມະນຸດນັ້ນ ແຕ່ຜູ້ທີ່ຫວ່ານຕາມພຣະວິນຍານກໍຈະເກັບກ່ຽວຊີວິດອັນຕລອດໄປເປັນນິດຈາກພຣະວິນຍານນັ້ນ.*

ອີກວິທີນຶ່ງທີ່ເຮົາສາມາດເຮັດໃຫ້ຈຸດປະສົງຂອງເຮົາບັນລຸໄດ້ໂດຍຜ່ານການຮັບໃຊ້ຄົນອື່ນແມ່ນໂດຍການໃຫ້ກຳລັງໃຈເຂົາເຈົ້າ. ໃນຖານະເປັນສິດຍາພິບານ, ຂ້າພະເຈົ້າໄດ້ຍິນຫຼາຍໆຄົນກ່າວໃນຕອນທ້າຍຂອງການນະມັສການ "ບົດເທດດີຫຼາຍອາຈານ". ຂ້າພະເຈົ້າຮູ້ວ່າຄົນສ່ວນຫຼາຍມີຄວາມຈິງໃຈ, ແຕ່ມັນຮູ້ສຶກຄືກັບວ່າເປັນສິ່ງທີ່ຄວນເວົ້າກັບສິດຍາພິບານຢູ່ແລ້ວ, ຢ່າງໃດກໍຕາມ, ເມື່ອມີຄົນມາຫາຂ້າພະເຈົ້າໃນເວລາຕໍ່ມາແລະໃຫ້ຕົວຢ່າງເຈາະຈົງຫຼືເຫດຜົນທີ່ຄຳເທສນາໄດ້ຊ່ວຍເຂົາ, ສິ່ງນັ້ນມີນ້ຳໜັກຫຼາຍສຳລັບຂ້າພະເຈົ້າ. ອັນນີ້ເປັນພອນແຫ່ງການໜູນໃຈສຸດໆ! ຖ້ອຍຄຳຂອງໂປໂລໝາຍເຖິງວ່າມັນຫຼາຍກວ່າການຕົບຫຼັງຍ້ອງຍໍທີ່ຈົບງາມ, ໂປໂລໄດ້ຊຸກຍູ້ໃຫ້ຜູ້ອ່ານຂອງລາວຊ່ວຍສນັບສນູນຜູ້ທີ່ສອນພຣະຄຳຂອງພຣະເຈົ້າ. ໃຫ້ເຮົາຮັບໃຊ້ພວກທີ່ຮັບໃຊ້ເຮົາ. ພວກທີ່ກ້າວເຂົ້າໃນງານຮັບໃຊ້ພຣະເຈົ້າໂດຍບໍ່ເຫັນແກ່ເງິນ; ມັນເປັນການຮຽກເອີ້ນຈາກພຣະເຈົ້າ. ອັດຕາສ່ວນໃນແຕ່ລະລັດກໍແຕກຕ່າງກັນໄປ, ແຕ່ມີຫຼາຍກວ່າເຄິ່ງນຶ່ງຂອງສິດຍາພິບານຕ້ອງເພີ້ມລາຍຮັບຂອງເຂົາເຈົ້າດ້ວຍວຽກອື່ນອີກ. ພວກສິດຍາພິບານເຫຼົ່ານີ້ເຮັດວຽກໃນຄ່າຈ້າງໜ້ອຍຢ່າງບໍ່ໜ້າເຊື່ອ, ແລະຍ້ອນວ່າພວກເຮົາມີໂອກາດ, ໃຫ້ພວກເຮົາເຮັດທຸກສິ່ງທີ່ພວກເຮົາສາມາດເຮັດໄດ້ເພື່ອສນັບສນູນພວກເຂົາເຈົ້າ. ພວກເຮົາຈະເກັບກ່ຽວຜົນປໂຍດເມື່ອເຮົາກ້າວເຂົ້າໄປຮັບໃຊ້ຄົນອື່ນ, ບໍ່ວ່າຈະເປັນການສນັບສນູນທາງດ້ານການເງິນ, ການໃຫ້ກຳລັງໃຈ, ຫຼືການຍ່າງຄຽງຂ້າງຄົນອື່ນແລະຊ່ວຍແບກພາລະຂອງເຂົາເຈົ້າ. *"ເພາະວ່າຜູ້ໃດຫວ່ານສິ່ງໃດລົງກໍຈະເກັບກ່ຽວສິ່ງນັ້ນ."* (ຂໍ້ 7). ໃນທີ່ນີ້ໂປໂລບໍ່ໄດ້ສນັບສນູນຄວາມເຊື່ອທີ່ຜິດພາດຂອງກັມ. ພຣະເຈົ້າບໍ່ໄດ້ເຮັດວຽກພາຍໃຕ້ການຂາດບາງບຸຄລິກຕໍ່ເຫດ-ແລະ-ຜົນ: ເຮັດດີແລະສິ່ງດີກໍເກີດຂຶ້ນກັບທ່ານ; ເຮັດບໍ່ດີແລະສິ່ງບໍ່ດີກໍເກີດຂຶ້ນກັບທ່ານ. ການເຊື່ອແບບນີ້ເປັນການຕົກຢູ່ໃນຄວາມສອດຄ່ອງກັບໝູ່ສາມຄົນຂອງໂຢບເຊື່ອວ່າໂຢບໄດ້ຮັບຄວາມທຸກທໍຣະມານຍ້ອນວ່າລາວໄດ້ເຮັດບາບ. ຢ່າງໃດກໍຕາມ, ມີຫຼັກການຂອງພຣະຄັມພີຢູ່ທີ່ນີ້, ແລະການກະເສດຊ່ວຍໃຫ້ພວກເຮົາເຂົ້າໃຈມັນແລະແຍກມັນອອກຈາກການເຊື່ອໃນກັມ, ເມື່ອຊາວກະສິກອນຫວ່ານເມັດພືດແນວໃດ, ລາວຄາດວ່າຈະໄດ້ເກັບກ່ຽວແນວນັ້ນ, ກັມແມ່ນບັງເອີນ. ກ່າວຄຳຮ້າຍໃສ່ເມັຽຂອງທ່ານຫຼັງຈາກນັ້ນຜ່ານໄປໃນມື້ນັ້ນຍາງລົດຂອງທ່ານກໍຮົ່ວ. ມັນບໍ່ແມ່ນເຫດ-ແລະ-ຜົນທີ່ແທ້ຈິງໃນທີ່ນີ້; ນັ້ນແມ່ນພຽງແຕ່ສອງເຫດການທີ່ເກີດຂຶ້ນໂດຍບໍ່ກ່ຽວຂ້ອງກັນ. ປູກເມັດໝາກເລັ່ນຢູ່ໃນສວນຫຼັງບ້ານແລະທ່ານສາມາດຄາດຫວັງຈະໄດ້ໝາກເລັ່ນ. ການກະເສດບໍ່ແມ່ນເຣື່ອງບັງເອີນ, ແລະທັງບໍ່ແມ່ນຫຼັກການທາງວິນຍານທີ່ປົກຄອງຊີວິດຂອງເຮົາ. ຫຼັກການທາງວິນຍານທີ່ໂປໂລໄດ້ເນັ້ນຢູ່ນີ້ຈະພາພວກເຮົາກັບຄືນໄປທີ່ ຄາລາເຕັຽ 5:16-26, ແລະທາງກົງກັນຂ້າມລະຫວ່າງການເຮັດວຽກຂອງເນື້ອໜັງແລະຜົນຂອງພຣະວິນຍານ. ການເຮັດຕາມຄວາມປາຖນາຂອງທັມະຊາດບາບບໍ່ມີຫຍັງເປັນຜົນດີຫຼືເປັນປໂຍດ, ແຕ່ການເດີນໄປໂດຍພຣະວິນຍານແລະການໃຫ້ພຣະອົງເກີດໝາກໃນຕົວເຮົາຈະເກັບກ່ຽວຜົນປໂຍດທັງໝົດທີ່ຕິດພັນກັບຊີວິດນິລັນດອນ! ພວກເຮົາບໍ່ຮັບໃຊ້ເພາະເຫັນແກ່ລາງວັນບາງຢ່າງສຳລັບພວກເຮົາ; <u>ເຮົາຮັບໃຊ້ເພາະເຮົາຮັກພຣະຄຣິດ, ແລະເຮົາຮັກພວກທີ່ພຣະອົງໄດ້ນຳມາໄວ້ຕໍ່ໜ້າເຮົາ</u>. <u>ພວກເຮົາບໍ່ໄດ້ໃຫ້ເພື່ອຈະໄດ້ຮັບ! ການກະທຳອອກຈາກແຮງຈູງໃຈທີ່ເຫັນແກ່ຕົວແມ່ນຜິດ, ແລະພຣະເຈົ້າບໍ່ໄດ້ຖືກຫຼອກລວງໂດຍການກະທຳພາຍນອກຂອງເຮົາ.</u> ພວກເຮົາພຽງແຕ່ຫຼອກລວງຕົນເອງເພາະວ່າ "ພວກເຈົ້າຈະຫຼອກລວງພຣະເຈົ້າບໍ່ໄດ້" (ຂໍ້ 7). ການເຮັດດີກັບຄົນອື່ນອາດເບິ່ງຄືວ່າດູດີຕໍ່ຕົວເອງແລະຄົນອ້ອມຂ້າງ, <u>ແຕ່ພຣະເຈົ້າຊົງເຫັນຫົວໃຈ.</u> ຄວາມຫເຍີທຍານແມ່ນດີ; ຄວາມຫເຍີທຍານທີ່ເຫັນແກ່ຕົວແມ່ນບໍ່ດີ- ແລະຄວາມຫເຍີທຍານທີ່ເຫັນແກ່ຕົວແມ່ນລະບຸໄວ້ໃນບັນດາວຽກງານຂອງເນື້ອໜັງ (5:20). ບໍ່ມີມໍລະດົກກ່ຽວຂ້ອງກັບພິທີກັມດັ່ງກ່າວ (ຂໍ້ 21), ມີແຕ່ການທຳລາຍເທົ່ານັ້ນ. ດັ່ງທີ່ພຣະເຈົ້າໄດ້ກ່າວຜ່ານຜູ້ປະກາດພຣະທັມໂຮເຊອາວ່າ, "ເມື່ອພວກເຂົາຫວ່ານລົມພວກເຂົາກໍເກັບກ່ຽວແຕ່ລົມບ້າໝູ" (ໂຮເຊອາ 8:7ກ).

### 3.ຄາລາເຕັຽ 6:9-10

*9. ຢ່າໃຫ້ພວກເຮົາເມື່ອຍລ້າໃນການເຮັດດີ ເພາະວ່າຖ້າໃຈພວກເຮົາບໍ່ທໍ້ຖອຍ ເຮົາກໍຈະໄດ້ເກັບກ່ຽວຜົນຕາມເວລາສົມຄວນ. 10. ເຫດສັນນັ້ນ ຕາມທີ່ມີໂອກາດໃຫ້ພວກເຮົາເຮັດການດີຕໍ່ຄົນທັງປວງ ແລະເປັນຕົ້ນວ່າຕໍ່ຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອ.*

*ເປັນຫຍັງເຮົາອາດເມື່ອຍກັບການເຮັດຄວາມດີ?*

ເພາະວ່າ "*ຜູ້ທີ່ຫວ່ານຕາມພຣະວິນຍານກໍຈະເກັບກ່ຽວຊີວິດອັນຕລອດໄປເປັນນິດຈາກພຣະວິນຍານນັ້ນ.*" (ຄລຕ 6:8), "ຢ່າໃຫ້ເຮົາເມື່ອຍລ້າໃນການເຮັດດີ" (ຂໍ້ 9), ໃນຂນະທີ່ເຮົາຮັບໃຊ້ຢູ່, ເຮົາອາດຈະເມື່ອຍ. ພວກເຮົາອາດສົງສັຍວ່າເຮົາກຳລັງສ້າງຄວາມ

ແຕກຕ່າງຢ່າງແທ້ຈິງຫຼືບໍ່. ຊາວກະສິກອນອາດມີຊ່ວງເວລາແບບນັ້ນຄືກັນ. ທົ່ງນາໄດ້ຖືກປູກຝັງ, ແລະບໍ່ມີຫຍັງເບິ່ງຄືວ່າຈະເກີດຂຶ້ນ. ການຂາດຝົນສາມາດເຮັດໃຫ້ຊາວກະສິກອນຄິດວ່າທັງໝົດແມ່ນບໍ່ມີຜົນປະໂຍດ. ແຕ່ໃນຂນະທີ່ຊາວນາຍັງເຮັດວຽກຢູ່ໃນທົ່ງນາ-ແລະ ເມື່ອເຮົາສືບຕໍ່ເຮັດວຽກງານໄຮ່ນາທີ່ພຣະເຈົ້າໄດ້ມອບໃຫ້-ການເກັບກ່ຽວຈະເກີດຂຶ້ນ. ພວກເຮົາອາດຈະບໍ່ເຫັນຜົນປະໂຍດສເມີຂອງການ *ເຮັດການດີຕໍ່ຄົນທັງປວງ* (ຂໍ້ 10), ແຕ່ໃຫ້ພວກເຮົາໄວ້ວາງໃຈພຣະເຈົ້າສໍາລັບໂອກາດທີ່ພຣະອົງໄດ້ມອບໃຫ້ພວກເຮົາ. ນັ້ນແມ່ນຄໍາເວົ້າທີ່ໂປໂລໃຊ້ສໍາລັບໂອກາດ (ຂໍ້ 10). ດັ່ງທີ່ພວກເຮົາໄດ້ຮັບໂອກາດໃນເວລານີ້, ໃຫ້ພວກເຮົາຍຶດເອົາມັນສໍາລັບໂອກາດທີ່ມັນເປັນການໃຫ້ກຽດແກ່ພຣະເຈົ້າແລະຮັບໃຊ້ຄົນອື່ນ. ພວກເຮົາຈະເຮັດແນວນີ້ຕໍ່ທຸກຄົນທີ່ພວກເຮົາຕິດຕໍ່ພົວພັນແຕ່ວ່າ "ໂດຍສະເພາະແມ່ນສໍາລັບຜູ້ທີ່ຢູ່ໃນຄອບຄົວຂອງຄວາມເຊື່ອ" (ຂໍ້ 10) ພວກເຮົາບໍ່ເພີກເສີຍຕໍ່ຄົນອື່ນ, ແຕ່ເມື່ອຄອບຄົວຂອງພຣະເຈົ້າສນັບສນູນກັນແລະກັນ, ເຮົາເອົາຈິງແທ້ກັບຂ່າວປະເສີດຢ່າງເຕັມທີ່, ນີ້ນໍາພວກເຮົາກັບຄືນໄປຫາຂໍ້ 2: "ຈົ່ງຊ່ອຍຮັບພາຣະອັນໜັກຂອງກັນແລະກັນ; ດ້ວຍວິທີນີ້, ທ່ານຈະເຮັດຕາມກົດບັນຍັດຂອງພຣະຄຣິດ." ພວກເຮົາຢູ່ທີ່ນັ້ນເພື່ອຊຶ່ງກັນແລະກັນ, ນັ້ນຄືຄວາມຄິດທີ່ຢູ່ເບື້ອງຫຼັງຂອງຄໍາວ່າຄອຍໂນເນັຽ (koinonia), ຖ້າທ່ານເປັນຜູ້ເຊື່ອມາເປັນລະຍະນຶ່ງແລ້ວ, ທ່ານອາດຈະຄຸ້ນເຄີຍກັບຄໍາພາສາກຣີກນີ້ທີ່ພວກເຮົາໃຊ້ສໍາລັບສາມະຄີທັມ "Fellowship". ການສາມະຄີທັມເປັນພາກສ່ວນນຶ່ງຂອງການຢູ່ເພື່ອຊຶ່ງກັນແລະກັນ (Koinonia), ແຕ່ວ່າແນວຄວາມຄິດມັນເລີກໄປກວ່ານັ້ນ. ການຢູ່ເພື່ອຊຶ່ງກັນແລະກັນມີຄວາມໝາຍວ່າແບ່ງປັນໃນສິ່ງທີ່ເປັນຂອງທົ່ວໄປ. ໃນຖານະເປັນພວກທີ່ຕິດຕາມພຣະຄຣິດ, <u>ພວກເຮົາມີການຢູ່ເພື່ອຊຶ່ງກັນແລະກັນເພາະວ່າພວກເຮົາແບ່ງປັນໃນສິ່ງທີ່ເປັນຂອງທົ່ວໄປຄືສາຍສັມພັນກັບພຣະຄຣິດ.</u> ພວກເຮົາຖືກສ້າງໃຫ້ເປັນນຶ່ງດຽວໃນພຣະອົງ. ການຢູ່ເພື່ອຊຶ່ງກັນແລະກັນໝາຍຄວາມວ່າພວກເຮົາຢູ່ໃນຊີວິດຄຣິສະຕຽນນີ້ນໍາກັນ. ຂນະທີ່ເຮົາເປັນນຶ່ງໃນພຣະຄຣິດ, ພາລະຕ່າງໆຂອງທ່ານມີຜົນກະທົບຕໍ່ຂ້າພະເຈົ້າ. ໃນຄວາມໝາຍນຶ່ງອີກ, ພວກມັນກາຍເປັນພາລະຂອງຂ້າພະເຈົ້າ. ພາລະຂອງທ່ານກໍຍັງເປັນພາລະຂອງທ່ານຢູ່, ແຕ່ກົດແຫ່ງຄວາມຮັກຂອງພຣະຄຣິດ-ບັງຄັບໃຫ້ຂ້າພະເຈົ້າແບ່ງປັນມັນໃນຫຼາຍວິທີທີ່ນັບບໍ່ຖ້ວນ. ຄໍາເວົ້າໜູນໃຈຕ່າງໆແມ່ນເປັນປະໂຍດ. ການຈັບມືທັກທາຍແມ່ນສວຍງາມ. ແຕ່ເມື່ອທ່ານຍ່າງຄຽງຂ້າງແລະເຮັດບາງສິ່ງທີ່ສາມາດຊ່ອຍຂ້າພະເຈົ້າໄດ້, ອັນນັ້ນມັນເປັນການສະແດງອອກຂອງຄວາມຮັກທີ່ເກີນກວ່າຄໍາເວົ້າ.

*ມີວິທີໃດແດ່ທີ່ເຮົາສາມາດເຮັດເພື່ອຄວາມດີຂອງທຸກຄົນ, ໂດຍສະເພາະຢູ່ໃນຄຣິສຕະຈັກ?*

## ນໍາໃຊ້ໃນຊີວິດ

ຈຸດປະສົງຂອງເຮົາຖືກຄົບເຕັມເມື່ອເຮົາຮັບໃຊ້ຄົນອື່ນດ້ວຍຄວາມຮັກ. ທ່ານຈະໃຊ້ຄວາມຈິງນີ້ແນວໃດໃນອາທິດນີ້? ເລືອກນຶ່ງໃນການນໍາໃຊ້ໃນຊີວິດຕໍ່ໄປນີ້:

- **ໜູນໃຈ.** ໃຫ້ຄິດເຖິງຜູ້ທີ່ມີບົດບາດສໍາຄັນໃນການສອນ, ການຕັກເຕືອນ, ຫຼືການແນະນໍາທ່ານ. ຊອກຫາວິທີທີ່ເຫັນໄດ້ໃນການສະແດງຄວາມຂອບໃຈແລະ *"ຈົ່ງແບ່ງສິ່ງທີ່ດີທຸກຢ່າງໃຫ້ແກ່ຜູ້ທີ່ສອນຕົວເຖີ້ນ."* (ກລຕ 6:6) ດ້ວຍນຶ່ງຫຼືຫຼາຍອັນ.
- **ຍຶດ.** ຂໍໃຫ້ພຣະເຈົ້າເຮັດໃຫ້ທ່ານຮູ້ຈັກໂອກາດໃດນຶ່ງໃນລະຫວ່າງວັນທີ່ຈະຮັບໃຊ້ຄົນອື່ນ. ຍຶດເອົາໂອກາດນັ້ນແລະຮັບໃຊ້ເປັນວິທີທີ່ຈະໃຫ້ກຽດແກ່ພຣະເຈົ້າ.
- **ສ້າງຕັ້ງຂຶ້ນໃໝ່.** ຖ້າທ່ານຮູ້ຈັກຜູ້ຕິດຕາມຂອງພຣະຄຣິດອີກຄົນນຶ່ງທີ່ຕໍ່ສູ້ກັບບາບຢູ່, ຈົ່ງມາຄຽງຂ້າງຜູ້ນັ້ນ. ໃຫ້ປາສຈາກຄວາມຈອງຫອງຫຼືການກ່າວໂທດ, ສເນີຄໍາເຕືອນທີ່ອ່ອນໂຍນເຖິງການເອີ້ນຂອງພຣະເຈົ້າໃຫ້ກັບໃຈແລະດໍາເນີນຊີວິດທີ່ເຊື່ອຟັງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**